ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 3966/ຜ-ຟຟລ.

ນະຄອນຫລວງວຽງຈັນ, ວັນທີ 11 SEP 2025

ໜ້າສີລາຍງານ

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື,
ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດ ຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື,
ບັນດາທ່ານຜູ້ຖືຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທີ່ນັບຖື.

ເລື່ອງ: ການໂອນຮຸ້ນໂຄງການເຂື່ອນໄຟຟ້ານ້ຳເທີນ 1 ທີ່ ຜ-ຟຟລ ຖືຮຸ້ນ ຈຳນວນ 15% ແລະ ຮຸ້ນ 60% ທີ່ ບໍລິສັດ EDL-Gen O&M ຈຳກັດ ຖືຄອງໃນ ບໍລິສັດ E&E ຈຳກັດ.

- ອີງຕາມ ຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ ຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ (ສະບັບປັບປຸງ) ສະບັບເລກທີ 15/ຄຄຊ, ລົງ ວັນທີ 11 ທັນວາ 2024.
- ອີງຕາມ ລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 008/ຕລຊລ, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ) ຂໍຖືເປັນກຽດແຈ້ງມະຕິຕົກລົງມູນວຽນ ຂອງຄະນະສະພາບໍລິຫານ ຜ-ຟຟລ ທີ່ສຳຄັນ ຄັ້ງວັນທີ 09 ກັນຍາ 2025, ລາຍລະອຽດດັ່ງລຸ່ມນີ້:

1. ເຫັນດີອະນຸມັດໃຫ້ ຜ-ຟຟລ ດຳເນີນການໂອນຮຸ້ນ ໂຄງການເຂື່ອນໄຟຟ້ານ້ຳເທີນ 1 ທີ່ ຜ-ຟຟລ ຖືຮຸ້ນໃນ ສັດສ່ວນ 15% ຫຼື ຄິດເປັນກຳລັງການຕິດຕັ້ງໃນສ່ວນຂອງການຖືຮຸ້ນເທົ່າກັບ 97,5 MW ແລະ ໂອນ ຮຸ້ນໃນສັດສ່ວນ 60% ທີ່ ບໍລິສັດ EDL-Gen O&M ຈຳກັດ ຖືຄອງໃນ ບໍລິສັດ E&E ຈຳກັດ ໃຫ້ ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ. ການໂອນຮຸ້ນດັ່ງກ່າວ ຈະບໍ່ກະທົບຕໍ່ຄວາມສາມາດໃນ ການດຳເນີນທຸລະກິດຂອງ ຜ-ຟຟລ ແລະ ຍັງຄົງຮັກສາຜົນປະໂຫຍດຂອງບັນດາຜູ້ຖືຮຸ້ນ. ພ້ອມດຽວກັນ ນີ້, ຜ-ຟຟລ ດຳເນີນການຕາມກົດໝາຍ ແລະ ຂໍ້ກຳນົດຕ່າງໆ ທີ່ກ່ຽວຂ້ອງຢ່າງເຄັ່ງຄັດ.
2. ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ຜູ້ທີ່ໄດ້ຮັບມອບໝາຍຕໍ່ ເປັນຜູ້ມີສິດອຳນາດໃນການເຈລະຈາ, ຕົກລົງ, ລົງນາມ ບັນດາຂໍ້ກຳນົດ ແລະ ເງື່ອນໄຂສັນຍາ, ການດຳເນີນການດ້ານເອກະສານ ແລະ ການ ປະຕິບັດການດຳເນີນວຽກງານອື່ນໆ ທີ່ຈຳເປັນ ແລະ ກ່ຽວຂ້ອງໄດ້ທຸກປະການ ເພື່ອສາມາດສຳເລັດ ສັນຍາໂອນຮຸ້ນ. ແລະ ໃຫ້ນຳເລື່ອງດັ່ງກ່າວລາຍງານໃນກອງປະຊຸມສາມັນຜູ້ຖືຮຸ້ນຄັ້ງຕໍ່ໄປ ເພື່ອຊາບຕາມ ລະບຽບການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຮັບຊາບ ແລະ ໃຊ້ຕາງລາຍງານ.

ຮຽນມາດ້ວຍຄວາມນັບຖື,

ປະທານສະພາບໍລິຫານ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ສຸລິວັດ ສຸວັນນະຈູມຄຳ

ຖະໜົນ ມິດຕະພາບ ລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ,ນະຄອນຫຼວງວຽງຈັນ, ສປປລາວ, ຕູ້ ປ.ນ 2392, ນະຄອນຫລວງວຽງຈັນ.
ໂທລະສັບ: (856-21) 316142 ແຟັກ: (856-21) 316141. ອີເມລ: edlgenhq@edlgen.com.la; ເວັບໄຊທ໌: www.edlgen.com.la